

# WOODEN MIRRORS

## Heritage for life

TEXT BY **JEETENDRA MARCELLINE**
PHOTOGRAPHS BY **PHOONSAB THEVONGSA / SOUKSAMLAN LALADETH**

Thinking inside, and outside the box, in the little world of Vientiane, over six years, the Lanjan's team of Lao young professionals and Lao contractors transformed four buildings into residential, commercial, and agricultural assets. Under the parasol of Lanna architecture, the wooden structures depict Tai and Dong charms.

During his travels in Laos in 2013, Sri Lankan-born Lao resident, Jeetendra Marcelline discovered wooden structures built by anonymous craftspeople, and architecture without architects. He was enthralled by the tradition, ingenuity, and splendor of indigenous construction created with strange tools.

Founded in 2017, Lanjan Holdings is involved in property development and strives to create modern urban habitats for living and working. The term "Lanjan" is from Kempfer's Universal History, where the kingdom of Lanjan, "the Land of a Million Elephants," is mentioned.

Architecture provides shelter, habitat, and envisages a social space, reflecting the vision of the creators and inhabitants. "When we present our architecture to the world, we hold a mirror to our past, present, and future. Travelers will better understand Laos and respect the wisdom underpinning pre-colonial construction techniques", shares Souksamlan "Toun" Laladeth, Project and Media Executive.

The written history of Lanna, the Land of a Million Rice Fields, dates back over six hundred years. From dynastic succession recorded in chronicles, Lanna was a group of principalities, with vague boundaries through landlocked mountainous territory, hemmed between Chiang Rung to the north, Tak and the Sukothai kingdoms to the south, the Salween River to the west, and the Mekong to the east.

The traditional architecture of Lanna reflected Buddhist beliefs and provided for the worship of ancestral spirits, nature, and other holy items. In the beginning, Lanna architecture was influenced by its neighbors, and from the 16th to 18th centuries western styles, via Britain and Burma, and Chinese elements of construction were introduced.

Stairway to heaven

Famous Lao King Setthathirath ruled Lanna from 1546-51, during which time cultural relations blossomed with its neighbors and Lanna architectural styles flourished in Laos. He established Vientiane as the capital in 1563 and built many iconic structures within what is now known as Vientiane's Historic Town Conservation Zone. The Zone, near the inner-city wall, inside which the evolution of Vientiane began around 1,000 AD, is of immense historical importance.

During the wars with feudal Siam, in 1827, many of the structures were burned down. After French rule commenced in 1893, many buildings and temples were restored and colonial architecture took root, with some traditional buildings incorporating colonial styles. From there evolved Vientiane's distinct urban landscape, a microcosm of the most influential styles and social movements, such as Art Nouveau and Bauhaus.

Lao architecture also exchanges inspiration with other Tai people in the region. The Tai are from several areas of Yunnan, scattered along China's southwest border. The Dong people, who are also part of the larger Tai family, are found in southwest China, inhabiting a rugged mountainous region. Tai and Dong architectural techniques are influenced by the physical and social environment of their communities, and by their agricultural and forestry practices.

Traditional Lao architecture has a unique and rich legacy, due to its culture, social standards, lifestyle, sense of community, belief, and Buddhist religion. The architecture bears witness to a deep social and environmental contract. "Thoughtful arrangement of space and design during modernization allows us to embrace a contemporary lifestyle while preserving the essence of the traditional structure," says Tae Thaichouathor, Operations Executive.

The traditional Lao "stilt house" tells of how previous generations considered the hot and humid climate, reducing the temperature and humidity by creating living places and a lifestyle that matched their surroundings. Raised houses mitigate flood damage. Airflow is optimized by open central aisles. The area beneath the house is used for storage, lounging during the hotter days, and livestock in pens, and for looms.

Heun Lanna is a traditional Lanna-style stilted home, built by wealthy inhabitants, where the rooms are connected via walkways and bridges. Highly valued wood such as teak, sandalwood, or mahogany are used.



Toupna depicts the mythical Tai bamboo "stilt house", described in an ancient folktale involving a lord and a golden phoenix. Built with bamboo from the forest and straw from the fields, the fabled house conveys tranquility and harmony with nature.

Sandalwood is Dong style, containing typical features such as vaulted ceilings, a single roof with separations beneath, and stairways inside leading onto a central corridor. The levels are visibly different, the downstairs is constructed with brick or cement, and the upstairs is constructed with wood only.

Hor Tamhuk is also a "stilt house" akin to the Tai "long house" spatial arrangement. It is built with finely carved wood high off the ground and hardwood stilts embedded either into the ground or on stones.

Design and restoration is carried out by Lanjan's team who believe as Vanpheng Phetsalath, Designer, shares, "Heritage buildings are part of the city's memory and a nation's character." The team has studied architecture and design in Laos and abroad. "We have learned a great deal on the job and apply this knowledge in our own home construction," says Thongxiong Norpor, Administration Executive, who lived at Sandalwood before the restoration.



1



2

*left:* Red brick road
**1.** Sandalwood Loft
**2.** Tae Thaichouathor
**3.** Light, form, function

"LANJAN HAS DEMONSTRATED THAT PRESERVATION VIA MODERNIZATION IS POSSIBLE IN LAOS WITH LAO SKILLS."



3

All spaces are multi-purpose and materials are chosen with careful consideration of authenticity and climate. For example, centuries-old wood, polished with beeswax and lime plaster, was used on walls. Modern materials and technology are utilized to achieve the highest standards and increase energy efficiency. Nature is sacrosanct, with all flora and fauna protected throughout.

Lanjan has demonstrated that preservation via modernization is possible in Laos with Lao skills. To encourage greater protection of Laos' architectural heritage, Jeetendra advocates policy measures such as access to long-term concessional finance for restoration of tangible and intangible heritage, as well as exemption from construction-related taxes. At a time of rapid change, Lanjan hopes that its efforts will inspire others and conserve Vientiane's unique beauty and future as a sustainable ASEAN city and hub.

The properties are not open to the public as yet. For more information on renting or viewing by appointment, visit www.lanjanholdings.com ■



# ແວ່ນສະທ້ອນ ສ່ອງສິ່ງປຸກສ້າງດ້ວຍໄມ້

## ມໍລະດົກເພື່ອຊີວິດ

ແປ ແລະ ຮຽບຮຽງໂດຍ ໄພບູນ ທະນະບົວສີ
ຮູບໂດຍ ພູມຊັບ ເທວົງສາ / ສຸກສໍາລານ ຫຼ້າລະເດດ

ເມື່ອຄິດເຫັນທັງພາຍໃນ ແລະ ພາຍນອກຂອບເຂດໂລກໜ່ວຍນ້ອຍໆຂອງນະຄອນຫຼວງວຽງຈັນຕະຫຼອດຊ່ວງ 6 ປີຜ່ານມາ, ທີມງານມືອາຊີບຮຸ່ນໃໝ່ ແລະ ຜູ້ຮັບເໝົາຊາວລາວຂອງບໍລິສັດລັນຈານ (Lanjan) ໄດ້ດໍາເນີນການປ່ຽນແປງອາຄານ 4 ຫຼັງໃຫ້ເປັນຊັບສິນທີ່ຢູ່ອາໄສ, ການຄ້າ ແລະ ກະສິກໍາ. ພາຍໃຕ້ຮົ່ມເງົາຂອງສະຖາປັດຕະຍະກໍາລ້ານນາ, ໂຄງສ້າງໄມ້ຂອງຕຶກອາຄານດັ່ງກ່າວໄດ້ສະແດງໃຫ້ເຫັນເຖິງສະເໜ່ຂອງຊາວໄຕ ແລະ ຊາວຕົ້ງ.

ໃນຊ່ວງທີ່ເດີນທາງມາທ່ຽວລາວປີ 2013, ທ່ານ ຈີເທນດຣາ ມາເຊນລິນ (Jeetendra Marcelline) ເຊິ່ງເປັນຄົນລາວທີ່ກໍາເນີດໃນສີລັງກາ ໄດ້ຄົ້ນພົບໂຄງສ້າງໄມ້ທີ່ສ້າງໂດຍຊ່າງສີມືນິລະນາມ ແລະ ສະຖາປັດຕະຍະກໍາທີ່ບໍ່ມີຜູ້ອອກແບບໃດໆ. ທັນທີທີ່ທ່ານ ຈີເທນດຣາ ໄດ້ພົບເຫັນໂຄງສ້າງໄມ້ດັ່ງກ່າວ ກໍເຮັດໃຫ້ທ່ານເກີດຄວາມຫຼົງໄຫຼໃນຈາຣີດປະເພນີ, ຄວາມຊ່າງຄິດຊ່າງປະດິດ ແລະ ຄວາມງົດງາມຂອງການກໍ່ສ້າງແບບພື້ນເມືອງທີ່ສ້າງຂຶ້ນດ້ວຍເຄື່ອງມືແປກໆທີ່ບໍ່ເຄີຍເຫັນມາກ່ອນ.

ບໍລິສັດ ລັນຈານ ໂຮນດິ້ງ ໂຊນ ຈໍາກັດ (Lanjan Holdings) ສ້າງຕັ້ງຂຶ້ນໃນປີ 2017 ໂດຍມີສ່ວນຮ່ວມໃນການພັດທະນາອະສັງຫາລິມະຊັບ ແລະ ມຸ່ງໝັ້ນທີ່ຈະສ້າງຊັບສິນທີ່ຢູ່ອາໄສໃນຕົວເມືອງທີ່ທັນສະໄໝສໍາລັບເປັນທີ່ພັກ ແລະ ບ່ອນເຮັດວຽກ. ຄໍາວ່າ “Lanjan” ແມ່ນມາຈາກປະຫວັດສາດສາກົນເຄມເຟີ ເຊິ່ງໄດ້ກ່າວເຖິງອານາຈັກລ້ານຊ້າງ “ດິນແດນທີ່ມີຊ້າງລ້ານໂຕ”.

ສະຖາປັດຕະຍະກໍາໄດ້ສະໜອງທີ່ພັກ, ທີ່ຢູ່ອາໄສ ແລະ ຈິນຕະນາການເຖິງພື້ນທີ່ທາງສັງຄົມ ເຊິ່ງສະທ້ອນໃຫ້ເຫັນເຖິງວິໄສທັດຂອງຜູ້ສ້າງ ແລະ ຜູ້ຢູ່ອາໄສ. ທ່ານ ສຸກສໍາລານ “ຕູນ” ຫຼ້າລະເດດ, ຜູ້ບໍລິຫານໂຄງການ ແລະ ຜູ້ສື່ຂ່າວ ກ່າວວ່າ: “ເມື່ອພວກເຮົາໄດ້ນໍາສະເໜີສະຖາປັດຕະຍະກໍາຂອງຕົນອອກສູ່ໂລກ, ກໍຄ້າຍກັບວ່າພວກເຮົາໄດ້ຖືແວ່ນແຍງທີ່ສະທ້ອນໃຫ້ເຫັນອະດີດ, ປັດຈຸບັນ ແລະ ອະນາຄົດທີ່ກ່ຽວຂ້ອງກັບຕົວຕົນຂອງພວກເຮົາ. ນັກທ່ອງທ່ຽວຈະມີໂອກາດໄດ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບປະເທດລາວໄດ້ດີຂຶ້ນ ພ້ອມທັງໃຫ້ຄວາມເຄົາລົບພູມປັນຍາທີ່ເປັນພື້ນຖານຂອງເຕັກນິກການກໍ່ສ້າງກ່ອນຍຸກອານານິຄົມ”.

ປະຫວັດສາດລ້ານນາ ເຊິ່ງເປັນດິນແດນທ້ອງທົ່ງນາທີ່ມີເປັນລ້ານໆທົ່ງລ້ວນແຕ່ມີປະຫວັດອັນຍາວນານກວ່າ 6 ຮ້ອຍປີ. ຈາກການສືບທອດຣາຊະວົງ ຕາມທີ່ໄດ້ບັນທຶກໄວ້ໃນພົງສາວະດານ, ລ້ານນາ ແມ່ນກຸ່ມອານາເຂດທີ່ມີຊາຍແດນຄຸມເຄືອ ຜ່ານເຂດພູດອຍທີ່ບໍ່ມີທາງອອກສູ່ທະເລ, ກັ້ນລະຫວ່າງຊຽງຮຸ້ງໄປທາງທິດເໜືອ, ຕາກ ແລະ ອານາຈັກສຸໂຂໄທໄປທາງທິດໃຕ້, ແມ່ນ້ຳສາລະວິນໄປທາງທິດຕາເວັນຕົກ ແລະ ແມ່ນ້ຳຂອງໄປທາງທິດຕາເວັນອອກ.

ສະຖາປັດຕະຍະກໍາລ້ານນາແບບດັ້ງເດີມ ໄດ້ສະທ້ອນໃຫ້ເຫັນເຖິງຄວາມເຊື່ອທາງພຸດທະສາສະໜາ ແລະ ຈັດໃຫ້ມີການບູຊາຜີບັນພະບູລຸດ, ທໍາມະຊາດ ແລະ ສິ່ງສັກສິດອື່ນໆ. ໃນເບື້ອງຕົ້ນ, ສະຖາປັດຕະຍະກໍາລ້ານນາ ແມ່ນໄດ້ຮັບອິດທິພົນຈາກປະເທດເພື່ອນບ້ານ ຕໍ່ມາກໍໄດ້ຮັບອິດທິພົນຈາກຕາເວັນຕົກໃນຊ່ວງສັດຕະວັດທີ 16 ຫາ 18 ຜ່ານທາງອັງກິດ ແລະ ມຽນມາ ແລະ ນໍາເອົາອົງປະກອບການກໍ່ສ້າງແບບຈີນມາໃຊ້.

ເຈົ້າໄຊຍະເສດຖາທິລາດ ກະສັດຜູ້ມີຊື່ສຽງໂດ່ງດັງຂອງລາວ ໄດ້ຂຶ້ນປົກຄອງລ້ານນາຕັ້ງແຕ່ປີ 1546 ຫາ 1551, ເຊິ່ງໃນເວລານັ້ນຖືເປັນຊ່ວງຄວາມສໍາພັນທາງວັດທະນະທໍາກັບບັນດາປະເທດເພື່ອນບ້ານກໍາລັງເບັ່ງບານ ແລະ ຮູບແບບສະຖາປັດຕະຍະກໍາລ້ານນາໃນລາວກໍມີຄວາມຈະເລີນຮຸ່ງເຮືອງ. ເຈົ້າໄຊຍະເສດຖາທິລາດ ໄດ້ສະຖາປານາເມືອງວຽງຈັນໃຫ້ເປັນເມືອງຫຼວງຂອງປະເທດ ໃນປີ 1563 ແລະ ດໍາເນີນການກໍ່ສ້າງອາຄານທີ່ໂດດເດັ່ນຫຼາຍແຫ່ງ ພາຍໃນຂອບເຂດທີ່ເອີ້ນວ່າ ເຂດອະນຸລັກເມືອງປະຫວັດສາດຂອງວຽງຈັນ. ເຂດດັ່ງກ່າວ ຕັ້ງຢູ່ໃກ້ກັບກໍາແພງເມືອງຊັ້ນໃນ ໂດຍວິວັດທະນາການຂອງເມືອງວຽງຈັນເລີ່ມໄດ້ຮັບການພັດທະນາໃນຊ່ວງປີ ຄສ 1000 ເຊິ່ງເປັນໄລຍະທີ່ມີຄວາມສໍາຄັນທາງປະຫວັດສາດຫຼາຍທີ່ສຸດ.

ໃນລະຫວ່າງສົງຄາມຕໍ່ສູ້ຕ້ານສັກດີນາສະຫຍາມໃນປີ 1827, ອາຄານຫຼາຍຫຼັງຖືກໄຟໄໝ້ຈົນເປັນເຖົ່າຖ່ານ. ພາຍຫຼັງຈັກກະພັດຝຣັ່ງເຂົ້າມາຍຶດຄອງປະເທດລາວ ໃນປີ 1893, ເຮືອນຊານບ້ານຊ່ອງ ແລະ ວັດວາອາຮາມຫຼາຍແຫ່ງໄດ້ຮັບການບູລະນະກໍ່ສ້າງ ແລະ ສະຖາປັດຕະຍະກໍາຍຸກອານານິຄົມກໍກໍາເນີດຂຶ້ນທັງຖືກຝັງແໜ້ນໄວ້ກັບບັນດາຕຶກອາຄານດັ່ງກ່າວ, ຂະນະທີ່ອາຄານແບບເກົ່າບາງຫຼັງ ກໍໄດ້ຮັບການບູລະນະປະສົມປະສານເຂົ້າກັບສະໄຕໂຄໂລນຽວ. ຈາກນັ້ນພູມີທັດອັນໂດດເດັ່ນຂອງວຽງຈັນກໍຖືກພັດທະນາໄປເປັນໂລກຂະໜາດນ້ອຍ ໃນຮູບແບບທີ່ມີອິດທິພົນຫຼາຍທີ່ສຸດ ແລະ ມີການເຄື່ອນໄຫວທາງສັງຄົມຫຼາຍຂຶ້ນ ເປັນຕົ້ນແມ່ນ ສິລະປະສະໄຕອາດນູໂວ ແລະ ເບົາເຮົາສ໌.



ສະຖາປັດຕະຍະກໍາຂອງລາວ ຍັງມີການແລກປ່ຽນແຮງບັນດານໃຈກັບຊາວໄຕອື່ນໆໃນພາກພື້ນນໍາອີກ. ຊາວໄຕທີ່ວ່ານີ້ແມ່ນມາຈາກຫຼາຍພື້ນທີ່ຂອງມົນທົນຢູນນານ ເຊິ່ງກະແຈກກະຈາຍຢູ່ຕາມຊາຍແດນທາງພາກຕາເວັນຕົກສ່ຽງໃຕ້ຂອງຈີນ. ຊາວຕົ້ງ ເຊິ່ງເປັນສ່ວນໜຶ່ງຂອງຕະກຸນໄຕໃຫຍ່ນັ້ນ ພົບເຫັນທາງຕາເວັນຕົກສ່ຽງໃຕ້ຂອງຈີນ ເຊິ່ງດໍາລົງຊີວິດຢູ່ໃນເຂດພູດອຍທີ່ທຸລະກັນດານ. ເຕັກນິກດ້ານສະຖາປັດຕະຍະກໍາຂອງໄຕ ແລະ ຕົ້ງ ແມ່ນໄດ້ຮັບອິດທິພົນຈາກສະພາບແວດລ້ອມທາງກາຍະພາບ ແລະ ສັງຄົມຂອງຊຸມຊົນ ແລະ ຈາກການປະຕິບັດທາງກະສິກໍາ ແລະ ປ່າໄມ້ຂອງພວກເຂົາເຈົ້າ.

ສະຖາປັດຕະຍະກໍາຂອງລາວແບບດັ້ງເດີມ ແມ່ນມີມໍລະດົກສືບທອດທີ່ເປັນເອກະລັກ ແລະ ອຸດົມຮັ່ງມີ ເນື່ອງມາຈາກວັດທະນະທໍາ, ມາດຕະຖານທາງສັງຄົມ, ວິຖີຊີວິດ, ຄວາມຮູ້ສຶກຂອງຊຸມຊົນ, ຄວາມເຊື່ອ ແລະ ພຸດທະສາສະໜາ. ສະຖາປັດຕະຍະກໍາດັ່ງກ່າວ ໄດ້ກາຍເປັນພະຍານກ່ຽວກັບສັນຍາທາງສັງຄົມ ແລະ ສິ່ງແວດລ້ອມອັນເລິກເຊິ່ງ. ທ່ານ ເຕ້ ໄທຊິວທໍ່, ຜູ້ບໍລິຫານຝ່າຍປະຕິບັດການ ກ່າວວ່າ: “ໃນການຈັດສັນພື້ນທີ່ ແລະ ການອອກແບບຢ່າງຮອບຄອບໃນລະຫວ່າງການປັບປຸງໃຫ້ທັນສະໄໝນັ້ນ ໄດ້ຊ່ວຍເຮັດໃຫ້ພວກເຮົາຈໍາເປັນຕ້ອງເປີດຮັບສະໄຕແບບຮ່ວມສະໄໝ ໃນຂະນະທີ່ຍັງຄົງຮັກສາແກ່ນແທ້ຂອງສະພາບແວດລ້ອມແບບດັ້ງເດີມເອົາໄວ້”.

“ເຮືອນຮ້ານ” ຂອງລາວແບບດັ້ງເດີມໄດ້ບອກເລົ່າກ່ຽວກັບວິຖີການດໍາລົງຊີວິດຂອງຄົນລຸ້ນກ່ອນ ທີ່ຄໍານຶງກ່ຽວກັບສະພາບອາກາດອັນຮ້ອນອົບເອົ້າ ແລະ ປຽກຊຸ່ມ, ໂດຍມີການຫຼຸດຜ່ອນອຸນຫະພູມ ແລະ ຄວາມຊຸ່ມດ້ວຍການສ້າງທີ່ຢູ່ອາໄສ ແລະ ດໍາລົງຊີວິດໃຫ້ສອດຄ່ອງຕາມຕາມສະພາບແວດລ້ອມໃນພື້ນທີ່ຂອງພວກຕົນ. ເຮືອນຍົກສູງ ຫຼື ເຮືອນຮ້ານ ຊ່ວຍຫຼຸດຜ່ອນຜົນກະທົບຈາກບັນຫານ້ຳຖ້ວມ ຂະນະທີ່ການຖ່າຍເທຂອງອາກາດໄດ້ຮັບການປັບໃຫ້ເໝາະສົມ ໂດຍມີຫ້ອງໂຖງທາງກາງແບບເປີດໂລ່ງ. ສໍາລັບກ້ອງລ່າງເຮືອນ ແມ່ນໃຊ້ສໍາລັບເກັບມ້ຽນສິ່ງຂອງ, ເປັນບ່ອນພັກຜ່ອນໃນວັນທີ່ອາກາດຮ້ອນເອົ້າ, ສ້າງຄອກສັດໃສ່ກ້ອງລ່າງເຮືອນ ແລະ ວາງກີ່ຕໍ່າຫູກ.

ເຮືອນລ້ານນາ ເປັນເຮືອນຍົກພື້ນສະໄຕລ້ານນາແບບດັ້ງເດີມ, ສ້າງໂດຍຜູ້ທີ່ມີຖານະຮັ່ງມີ ເຊິ່ງຫ້ອງພັກຕ່າງໆເຊື່ອມຕໍ່ກັນກັບຫ້ອງໂຖງ, ມີການນໍາໃຊ້ໄມ້ລາຄາແພງໃນການກໍ່ສ້າງ ເຊັ່ນ ໄມ້ສັກ, ໄມ້ຈັນ ຫຼື ໄມ້ມະຮອກການີ.

Toupna ໄດ້ພັນລະນາກ່ຽວກັບ “ເຮືອນຮ້ານ” ໄມ້ໄຜ່ຂອງຊາວໄຕໃນຕໍານານ, ເຊິ່ງໄດ້ບັນລະຍາຍໃນນິທານພື້ນເມືອງກ່ຽວກັບເຈົ້າເມືອງ ແລະ ນົກຟີນິກສີທອງ. ເຮືອນໃນນິທານເລື່ອງດັ່ງກ່າວ ສ້າງດ້ວຍໄມ້ໄຜ່ທີ່ຕັດມາຈາກປ່າ ແລະ ເຟືອງແຫ້ງທີ່ຫາໄດ້ຈາກທົ່ງນາ ເຊິ່ງສື່ໃຫ້ເຫັນເຖິງຄວາມງຽບສະຫງົບ ແລະ ຄວາມກົມກືນກັບທໍາມະຊາດ.

ການປຸກສ້າງເຮືອນດ້ວຍໄມ້ຈັນ ຖືເປັນຮູບແບບການປຸກສ້າງຂອງຊາວຕົ້ງ ໂດຍມີລັກສະນະທົ່ວໄປ ໄດ້ແກ່ ເພດານໂຄ້ງ, ຫຼັງຄາດ່ຽວພ້ອມຊ່ອງແຍກດ້ານລຸ່ມ ແລະ ຂັ້ນໄດດ້ານໃນເຊິ່ງນໍາໄປສູ່ຫ້ອງໂຖງທາງກາງ. ມີລະດັບແຕກຕ່າງກັນຢ່າງເຫັນໄດ້ຊັດເຈນ ເຊິ່ງຊັ້ນລຸ່ມສ້າງດ້ວຍດິນຈີ່ ຫຼື ຊີມັງ ແລະ ຊັ້ນເທິງຈະສ້າງດ້ວຍໄມ້ຢ່າງດຽວເທົ່ານັ້ນ.

ຫໍຕໍາຮັກຍັງເປັນ “ເຮືອນຮ້ານ” ຄ້າຍກັບການຈັດວາງທາງພື້ນທີ່ແບບ “ເຮືອນຍາວ” ຂອງຊາວໄຕ ເຊິ່ງສ້າງຂຶ້ນດ້ວຍໄມ້ແກະສະຫຼັກຢ່າງວິຈິດງົດງາມ ໂດຍຕັ້ງຢູ່ຫ່າງຈາກພື້ນດິນ ແລະ ມີເສົາໄມ້ເນື້ອແຂງຝັງຢູ່ໃນດິນ ຫຼື ຕັ້ງເທິງກ້ອນຫີນ.

ການອອກແບບ ແລະ ບູລະນະການກໍ່ສ້າງ ແມ່ນດໍາເນີນການໂດຍທີມງານລັນຈານທີ່ໜ້າເຊື່ອຖື ເຊິ່ງທ່ານ ວັນເພັງ ເພັດສະລາດ, ນັກອອກແບບໄດ້ກ່າວວ່າ: "ອາຄານມໍລະດົກຖືເປັນສ່ວນໜຶ່ງໃນຄວາມຊົງຈໍາຂອງຕົວເມືອງ ແລະ ຍັງເປັນເອກະລັກຂອງຊາດ.“ ທີມງານໄດ້ມີການສຶກສາກ່ຽວກັບ ›

**ດ້ານຊ້າຍ**: ເຮືອນລ້ານນາ
**1.** ສຸກສໍາລານ ຫຼ້າລະເດດ
**2.** ຕູບນາ, ທີ່ອາໄສເຮັດດ້ວຍໄມ້ປ່ອງ

ສະຖາປັດຕະຍະກຳ ແລະ ການອອກແບບທັງພາຍໃນ ແລະ ຕ່າງປະເທດ. ທ່ານ ທອງຊິງ ນໍປໍ, ຜູ້ບໍລິຫານ ທັງເປັນຜູ້ທີ່ເຄີຍອາໄສຢູ່ເຮືອນໄມ້ຈັນກ່ອນການບູລະນະ ກ່າວວ່າ: "ພວກເຮົາໄດ້ຮຽນຮູ້ຫຼາຍຢ່າງຈາກໜ້າວຽກນີ້ ແລະ ນຳເອົາຄວາມຮູ້ດັ່ງກ່າວໄປນຳໃຊ້ເຂົ້າໃນການປຸກສ້າງເຮືອນຂອງຕົນເອງ."

ພື້ນທີ່ທັງໝົດມີລັກສະນະເປັນອະເນກປະສົງ ແລະ ຄັດເລືອກວັດສະດຸຢ່າງຮອບຄອບໂດຍຄຳນຶງເຖິງຄວາມຖືກຕ້ອງ ແລະ ສະພາບອາກາດ. ຕົວຢ່າງ: ໄມ້ເກົ່າແກ່ທີ່ມີອາຍຸຫຼາຍສັດຕະວັດ ເຊິ່ງຂັດດ້ວຍຂີ້ເຜີ້ງ ແລະ ໃຊ້ປູນຂາວທາຕາມຝາຜະໜັງ. ວັດສະດຸ ແລະ ເຕັກໂນໂລຢີສະໄໝໃໝ່ຖືກນຳມາໃຊ້ ເພື່ອໃຫ້ໄດ້ມາດຕະຖານສູງສຸດ ແລະ ເພີ່ມປະສິດທິພາບໃນການນຳໃຊ້ພະລັງງານ. ທຳມະຊາດ ແມ່ນສິ່ງທີ່ບໍ່ສາມາດທຳລາຍໄດ້ ໂດຍພືດ ແລະ ສັດທຸກຊະນິດລ້ວນແຕ່ໄດ້ຮັບການປົກປ້ອງຕະຫຼອດເວລາ.

ລັນຈານ ໄດ້ສະແດງໃຫ້ເຫັນໄດ້ວ່າ ການອະນຸລັກຮັກສາດ້ວຍການປັບປຸງໃຫ້ທັນສະໄໝ ສາມາດເຮັດໄດ້ໃນລາວດ້ວຍສີມືຂອງຄົນລາວເອງ. ເພື່ອເປັນການຊຸກຍູ້ສົ່ງເສີມໃນການປົກປັກຮັກສາມໍລະດົກທາງສະຖາປັດຕະຍະກຳຂອງລາວໃຫ້ຫຼາຍຂຶ້ນ, ທ່ານ ຈິເທນດຣາ ໄດ້ໃຫ້ການສະໜັບສະໜູນມາດຕະການທາງນະໂຍບາຍຕ່າງໆ ເຊັ່ນ ການເຂົ້າເຖິງທາງການເງິນໃນຮູບແບບການສຳປະທານໄລຍະຍາວເພື່ອການບູລະນະຟື້ນຟູ ລວມທັງການຍົກເວັ້ນອາກອນທີ່ກ່ຽວຂ້ອງກັບການກໍ່ສ້າງ. ໃນຊ່ວງເວລາຂອງການປ່ຽນແປງຢ່າງວ່ອງໄວ, ລັນຈານ ຫວັງວ່າຄວາມພະຍາຍາມຂອງຕົນ ຈະຊ່ວຍສ້າງແຮງບັນດານໃຈໃຫ້ແກ່ຜູ້ອື່ນໄດ້ ແລະ ຊ່ວຍອະນຸລັກຄວາມງາມອັນເປັນເອກະລັກລວມທັງອະນາຄົດຂອງເມືອງວຽງຈັນ ໃນຖານະທີ່ເປັນຕົວເມືອງ ແລະ ເປັນສູນກາງອາຊີທີ່ຍືນຍົງ.

ປັດຈຸບັນຊັບສິນທີ່ຢູ່ອາໄສດັ່ງກ່າວ ຍັງບໍ່ທັນໄດ້ເປີດໃຫ້ບໍລິການແກ່ສາທາລະນະຊົນ, ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການເຊົ່າ ຫຼື ເຂົ້າເບິ່ງພື້ນທີ່ຕົວຈິງ ແມ່ນສາມາດນັດໝາຍໄດ້ລ່ວງໜ້າ ທີ່ www.lanjanholdings.com ■

"ລັນຈານ ໄດ້ສະແດງໃຫ້ເຫັນໄດ້ວ່າ ການອະນຸລັກຮັກສາດ້ວຍການປັບປຸງໃຫ້ທັນສະໄໝ ສາມາດເຮັດໄດ້ໃນລາວດ້ວຍສີມືຂອງຄົນລາວເອງ."







1. ທ່ານ້ຳ
2. ທົງຊົງ ນໍປໍ
3. ຫໍຕໍ່າຫູກ